# ສູນຮ່ວມມືລາວ~ຍີ່ປຸ່ນ ຍິນດີຕ້ອນຮັບ ນັກສຶກສານັບແຕ່ປີ 3 ຂຶ້ນໄປ ຂອງ ມຊ ທຸກຄົນ ເຂົ້າຮຽນ ຫລັກສູດ "Degree Plus"

ເພື່ອປະກອບສ່ວນຊ່ວຍພັດທະນາທັກສະດ້ານການຄຸ້ມຄອງບໍລິຫານໄປຄຽງຄູ່ກັບຄວາມຮູ້ດ້ານວິຊາສະເພາະໃດໜຶ່ງສຳລັບນັກສຶກສາ ມ.ຊ ທີ່ກຳລັງຈະຮຽນຈົບ ໃນການປະກອບອາຊີບໃຫ້ມີປະສິດຕິພາບ ແລະ ປະສິດຕິຜົນຍິ່ງຂຶ້ນ, ສຳລັບໄລຍະເດືອນ ກຸມພາ - ເມສາ 2009 , ສູນຮ່ວມມືລາວ-ຍີ່ປຸ່ນ ຈະໄດ້ຈັດຫລັກສູດບໍລິຫານທຸລະກິດລົງເລິກ ໃນ 5 ວິຊາ ສຳລັບນັກສຶກສານັບແຕ່ ປີ 3 ຂຶ້ນໄປ ຂອງ ມ.ຊ. ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

| ຊື່ວິຊາຮຽນ | ໄລຍະເວລາຮຽນ | ຈຸດປະສົງ ແລະ ເນື້ອໃນຂອງແຕ່ລະວິຊາ |
|---|---|---|
| ບໍລິຫານພຶດຕິກຳ ໃນອົງກອນ | ພາກເຊົ້າ08:30~11:30<br>ພາກບ່າຍ13:30~16:30<br>ພາກແລງ17:30~20:30<br>(15 ຊົ່ວໂມງ) | ຈະຊ່ວຍໃຫ້ຜູ້ເຂົ້າຮຽນເຂົ້າໃຈທິດສະດີ ກ່ຽວກັບພຶດຕິກຳຂອງຄົນຢູ່ໃນອົງກອນຢ່າງເປັນລະບົບ, ຊ່ວຍໃຫ້ເຂົ້າໃຈ ທັດສະນະຄະຕິ ແລະ ກິດສຳພັນຂອງພະນັກງານທຸກລະດັບໃນອົງກອນ ລວມທັງການ ຈູງໃຈ, ຄວາມຂັດແຍ່ງ, ບົດບາດໜ້າທີ່, ຄວາມກົດດັນ, ແລະ ການສື່ສານ ຊຶ່ງຜູ້ເຂົ້າຮຽນຈະສາມາດນຳໄປປັບປຸງ, ພັດທະ ນາ ແລະ ໝູນໃຊ້ເຂົ້າໃນການບໍລິຫານພະນັກງານຢູ່ອົງກອນຂອງຕົນໄດ້ຢ່າງຖືກຕ້ອງເໝາະສົມ. |
| ການຕະຫລາດ | ພາກເຊົ້າ08:30~11:30<br>ພາກບ່າຍ13:30~16:30<br>ພາກແລງ17:30~20:30<br>(15 ຊົ່ວໂມງ) | ການດຳເນີນງານຂອງທຸກໆຫົວໜ່ວຍທຸລະກິດ ຈຳເປັນຕ້ອງມີລະບົບການຕະຫຼາດທີ່ດີ ເພື່ອການແຂ່ງຂັນທາງການຕະຫຼາດ ເຮັດໃຫ້ທຸລະກິດຂະຫຍາຍຕົວຢ່າງໝັ້ນຄົງ, ຫຼັກສູດນີ້ຈະຊ່ວຍໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມເຂົ້າໃຈທິດສະດີຕ່າງໆດັ່ງນີ້: ຄວາມຮູ້ພື້ນຖານກ່ຽວກັບການຕະຫຼາດ, ລະບົບຂໍ້ມູນຂ່າວສານທາງການຕະຫຼາດ, ການວິໄຈຕະຫຼາດ, ການກຳນົດຕະຫຼາດເປົ້າໝາຍ, ການວາງຕຳແໜ່ງຜະລິດຕະພັນ, ພຶດຕິກຳຂອງຜູ້ບໍລິໂພກ, ສ່ວນປະສົມທາງການຕະຫຼາດ, ຕະຫຼາດລະຫວ່າງປະເທດ, ການບໍລິຫານຄຸນນະພາບໂດຍລວມ, ການສ້າງຄວາມພໍໃຈໃຫ້ແກ່ລູກຄ້າ, ການວິເຄາະຄູ່ແຂ່ງ, ການສ້າງຄວາມແຕກຕ່າງທາງດ້ານຜະລິດຕະພັນ ແລະຍຸດທະສາດທາງການຕະຫຼາດເພື່ອການແຂ່ງຂັນ. |
| ການບໍລິຫານຢ່າງມີປະສິດທິພາບດ້ວຍ 5ສ ແລະ Kaizen ຂອງຍີ່ປຸ່ນ | ພາກເຊົ້າ08:30~11:30<br>ພາກບ່າຍ13:30~16:30<br>ພາກແລງ17:30~20:30<br>(15 ຊົ່ວໂມງ) | ຈະຊ່ວຍໃຫ້ຜູ້ເຂົ້າຮຽນໄດ້ຮັບແນວຄວາມຄິດ ແລະ ທັກສະ ທີ່ມີລັກສະນະວິທະສາດໃນການຄວບຄຸມການຜະລິດ ນັບຕັ້ງແຕ່ຂະບວນການອອກແບບ, ການນຳໃຊ້ວັດຖຸດິບ, ການຈັດແຈງ ແລະ ການນຳໃຊ້ພາຫະນະ ອຸບປະກອນການຜະລິດ ຈົນຮອດຂະບວນການຈັດສົ່ງສິນ ຄ້າອອກ, ຊຶ່ງຈະຊ່ວຍປັບປຸງ ແລະ ເພີ່ມປະສິດຕິພາບໃນການຜະລິດເຮັດໃຫ້ ບໍລິສັດສາມາດຫລຸດຜ່ອນຕົ້ນທຶນການຜະລິດລົງ ແລະ ຈະໄດ້ຮັບກຳໄລເພີ່ມຂຶ້ນ. ເນື້ອໃນຕົ້ນຕໍຈະລວມທັງສູດເດັດແບບຍີ່ປຸ່ນ ທີ່ກຳລັງມາແຮງ [ຫຼັກການ ແລະ ວິທີປະຕິບັດຕົວຈິງກ່ຽວກັບ 5ສ ແລະ Kaizen] |
| ບໍລິຫານ ຊັບພະຍາກອນມະນຸດ | ພາກເຊົ້າ08:30~11:30<br>ພາກບ່າຍ13:30~16:30<br>ພາກແລງ17:30~20:30<br>(15 ຊົ່ວໂມງ) | ໃນການດຳເນີນງານຂອງທຸກຫົວໜ່ວຍທຸລະກິດ ແລະ ອົງການບໍລິຫານຕ່າງໆກໍລ້ວນແຕ່ຕ້ອງການປັດໃຈທີ່ຈຳເປັນເຊັ່ນ: ຊັບສິນທາງດ້ານການເງິນ, ພາຫະນະອຸບປະກອນ/ວັດຖຸດິບ, ຄົນ, ແລະເຕັກໂນໂລຊີ. ແຕ່ໃນນັ້ນ ຄົນ ຫຼື ຊັບພະຍາກອນມະນຸດ ແມ່ນປັດໃຈສຳຄັນທີ່ສຸດຕໍ່ຄວາມສຳເລັດ ຫຼື ຄວາມຫຼົ້ມເຫລວຂອງອົງກອນຈຸດປະສົງຕົ້ນຕໍຂອງວິຊານີ້ ຈຶ່ງເນັ້ນໃສ່ຄວາມຮູ້ໃນການສ້າງແຜນກ່ຽວກັບການບໍລິຫານຊັບພະຍາກອນມະນຸດ, ຄາດຄະເນທ່າອ່ຽງ ການປ່ຽນແປງ ຂອງການບໍລິຫານຊັບພະຍາກອນມະນຸດໃນອົງກອນຍຸກປະຈຸບັນ, ສາມາດ ແກ້ໄຂບັນຫາ ແລະ ປັບປຸງສະຖານະການທີ່ເກີດຂຶ້ນເພື່ອເຮັດ ໃຫ້ອົງກອນມີຜົນສຳເລັດສູງ. ເນື້ອໃນຕົ້ນຕໍຈະສຶກສາເຖິງ ການວິເຄາະໜ້າວຽກ ແລະ ອະທິບາຍໜ້າວຽກ, ການຈ້າງ ແລະ ຄັດເລືອກ, ການເລື່ອນຂັ້ນ, ການໂອນຍ້າຍ ແລະ ການໄລ່ອອກ, ການຕີລາຄາຄວາມສາມາດ, ການຝຶກອົບຮົມ ແລະ ພັດທະນາອາຊີບ, ແນວໂນ້ມ ການປ່ຽນແປງຍຸດທະສາດກ່ຽວກັບຊັບພະຍາກອນມະນຸດ ຕະຫຼອດເຖິງການປັບປຸງຍຸດທະສາດການແຂ່ງຂັນ |

| | | |
|---|---|---|
| ການປະກອບແຜນທຸລະກິດ (ການຂຽນແຜນທຸລະກິດ) | ພາກເຊົ້າ08:30~11:30<br>ພາກບ່າຍ13:30~16:30<br>ພາກແລງ17:30~20:30<br>(15 ຊົ່ວໂມງ) | ການວາງແຜນທຸລະກິດທີ່ມີປະສິດທິພາບ ແມ່ນຈຸດຫົວລ້ຽວຫົວຕໍ່ ຂອງຄວາມສຳເລັດໃນການປະກອບກິດຈະການ. ເປົ້າໝາຍຂອງວິຊານີ້ແມ່ນເພື່ອໃຫ້ຜູ້ເຂົ້າຝຶກອົບຮົມຮູ້ຈັກຂະບວນການໃນການກຳນົດ ແລະວາງແຜນທຸລະກິດ (ຂອງທຸລະກິດສ່ວນຕົວ ຫຼື ບໍລິສັດ). ການຂຽນແຜນທຸລະກິດມີຄວາມສຳຄັນສຳລັບທັງບໍລິສັດຕັ້ງໃໝ່ ແລະ ເກົ່າເພາະມັນມີການພົວພັນເຖິງການວິເຄາະບັນຫາພື້ນຖານທີ່ຕິດພັນກັບການສ້າງ ຫຼື ຂະຫຍາຍທຸລະກິດ. ຜູ້ເຂົ້າຝຶກອົບຮົມຍັງຈະໄດ້ຮຽນຮູ້ວິທີການ ທົດສອບຄວາມສ່ຽງ, ສິ່ງທ້າທາຍ ແລະຜົນຕອບແທນ ທີ່ເກີດຂື້ນໃນຂະບວນການດຳເນີນທຸລະກິດ ເພື່ອສາມາດນຳໃຊ້ ແລະ ສັງລວມເອົາແນວຄວາມຄິດ ແລະເຕັກນິກຈາກຂອບເຂດໜ້າທີ່ຕ່າງໆ ດ້ານບັນຊີ, ການເງິນ, ເສດຖະສາດບໍລິຫານ, ການຕະຫຼາດ, ການບໍລິຫານການຜະລິດ ແລະ ພຶດຕິກຳອົງກອນ ເຂົ້ານຳໃຊ້ໃນການພັດທະນາບໍລິສັດໃໝ່ ຫຼືຂະຫຍາຍບໍລິສັດ ຢ່າງມີປະສິດທິພາບ. |

- ຄ່າຮຽນສຳລັບນັກສຶກສາ ມ.ຊ 150.000 ກີບ/ວິຊາ (ໜຶ່ງແສນຫ້າສິບພັນກີບ ລວມທັງຄ່າເອກະສານປະກອບການຮຽນ).
- ວິຊາໃດມີຜູ້ລົງທະບຽນຮຽນເຕັມຈຳນວນ 15~30 ຄົນ ຈະໄດ້ເປີດສອນວິຊານັ້ນ.
- ຮັບແບບຟອມສະໝັກ ແລະ ລົງທະບຽນໄດ້ ທີ່ສູນຮວມມືລາວຍີ່ປຸ່ນ (ວິທະຍາເຂດດົງໂດກ).

ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ໝາຍເລກໂທລະສັບ (020) 5909 130 (ອ.ຈ. ສຸດຖະໜອມ ພິນສະຫວາດ) ຫຼື (020) 2446 461 (ນ. ລັດດາພອນ ຂັນຕິຍະວົງ).